# Law on Investment Promotion

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 11
## Cancelation and termination
## ການຍົກເລີກ (ຍຸບເລີກ) ແລະ ສິ້ນສຸດການລົງທຶນ

### 1. ຄວາມໝາຍຂອງການຍົກເລີກ(ຍຸບເລີກ) ແລະ ສິ້ນສຸດການລົງທຶນ

ໃນຄໍາສັບຄໍາວ່າຍົກເລີກ ແລະ ຍຸບເລີກໃນພາສາລາວມີຄວາມໝາຍ ແລະ ຄຸນລັກສະນະອັນດຽວກັນ ຕ່າງແຕ່ຈະໝູນໃຊ້ແນວໃດໃຫ້ແທດເໝາະກັບເນື້ອໃນທີ່ຢາກເວົ້າ ເປັນຕົ້ນວ່າ: ໃນກົດໝາຍບາງທີ່ເຮົາກໍຈະພົບເຫັນ ການໃຊ້ຍຸບເລີກ ຫຼື ຍົກເລີກ ແລ້ວແຕ່ລະກໍລະນີ, ເຊັ່ນ: ການຍຸບເລີກວິສາຫະກິດ, ການຍົກເລີກການລົງທຶນ, ການຍົກເລີກສັນຍາ...

ການຍົກເລີກ (ຍຸບເລີກ)ການລົງທຶນ ແລະ ການສິ້ນສຸດການລົງທຶນ ແມ່ນການຢຸດເຊົາການເຄື່ອນໄຫວທຸລະກິດທີ່ເກີດຈາກ ຫຼາຍສາເຫດແຕກຕ່າງກັນ ເກີດຈາກຜູ້ລົງທຶນເອງ ຫຼື ເກີດຈາກອົງການຄຸ້ມຄອງຂອງລັດເປັນຜູ້ໃຊ້ມາດຕະການ...ເຖິງ ຢ່າງໃດກໍຕາມຖ້າບໍ່ມີການຍົກເລີກ (ຍຸບເລີກ)ກໍບໍ່ມີການສິ້ນສຸດ[1]. ສະນັ້ນ, ຈຶ່ງສາມາດເວົ້າໄດ້ວ່າ: ການຍົກເລີກການລົງທຶນແມ່ນການຢຸດຕິການເຄື່ອນໄຫວລົງທຶນ, ໝາກຜົນຂອງການຍົກເລີກການລົງທຶນແມ່ນການສິ້ນສຸດການເຄື່ອນໄຫວລົງທຶນ.

ການຍົກເລີກ (ຍຸບເລີກ)ານລົງທຶນ ແມ່ນການຢຸດຕິເຄື່ອນໄຫວລົງທຶນ ຫຼື ຢຸດຕິການເຄື່ອນໄຫວຂອງວິສາຫະກິດ ແລະ ຊື່ຂອງວິສາຫະກິດຈະຖືກຍຸບເລີກພ້ອມດຽວກັບການຍົກເລີກ (ຍຸບເລີກ)ການລົງທຶນ, ພາຍຫຼັງຊື່ວິສາຫະກິດໄດ້ຖືກຍຸບເລີກແລ້ວ, ເຈົ້າຂອງຊື່ວິສາຫະກິດຕ້ອງປົດປ້າຍຊື່ວິສາຫະກິດອອກພາຍໃນເຈັດວັນ, ນັບແຕ່ວັນມີແຈ້ງການໃຫ້ຍົກເລີກການລົງທຶນ ເປັນຕົ້ນໄປ; ສໍາລັບບຸກຄົນ ຫຼື ນິຕິບຸກຄົນທີ່ຍັງນໍາໃຊ້ຊື່ວິສາຫະກິດ ຫຼື ທະບຽນວິສາຫະກິດທີ່ຍຸບເລີກແລ້ວນັ້ນ ໃຫ້ຖືວ່າຜູ້ກ່ຽວເຄື່ອນໄຫວທຸລະກິດໂດຍບໍ່ໄດ້ຂຶ້ນທະບຽນວິສາຫະກິດ.

ໃນກົດໝາຍວ່າດ້ວຍວິສາຫະກິດຍັງໄດ້ກໍານົດວ່າ: ວິສາຫະກິດສ່ວນບຸກຄົນຈະຖືກຍຸບເລີກໃນກໍລະນີ ດັ່ງນີ້[2]:

1) ເຈົ້າຂອງວິສາຫະກິສ່ວນບຸກຄົນຕັດສິນໃຈຍຸບເລີກ;
2) ສານຕັດສິນໃຫ້ຍຸບເລີກ;
3) ລົ້ມລະລາຍ;
4) ເຈົ້າຂອງວິສາຫະກິດເສຍຊີວິດ ຫຼື ຂາດຄວາມສາມາດທາງດ້ານການປະພຶດ ໂດຍບໍ່ມີຜູ້ສືບທອດ.

### 2. ກໍລະນີທີ່ກໍ່ໃຫ້ເກີດມີການຍົກເລີກ (ຍຸບເລີກ)ການລົງທຶນ[3]

ການລົງທຶນຈະຖືກຍົກເລີກ ໃນກໍລະນີດັ່ງນີ້:

---

[1] ຕໍາລາຮຽນວິຊາກົດໝາຍສົ່ງເສີມການລົງທຶນ, ສະບັບປີ 2021.
[2] ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013, ມາດຕາ 36.
[3] ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016, ມາດຕາ 87.

1) ຕາມການສະເໜີຂອງຜູ້ລົງທຶນ ຫຼື ຄູ່ສັນຍາຝ່າຍໃດຝ່າຍໜຶ່ງໃນກໍລະນີທີ່ມີການລະເມີດຂໍ້ຜູກພັນຂອງອີກຝ່າຍໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ ຫຼື ກົດໝາຍ ແລະ ລະບຽບການ, ໃນກໍລະນີນີ້ຜູ້ລົງທຶນເອງ ເປັນຜູ້ສະເໜີເພື່ອຍົກເລີກການລົງທຶນເພາະຖ້າດໍາເນີນກິດຈະການຕໍ່ໄປກໍອາດຈະຫຼຸບທຶນ ຫຼື ອາດຈະສ້າງຄວາມເສຍຫາຍໃຫ້ຝ່າຍໃດຝ່າຍໜຶ່ງ.

2) ບໍ່ສາມາດແກ້ໄຂໄດ້ຕາມເງື່ອນໄຂໄດ້ ຍ້ອນບໍ່ປະຕິບັດຕາມເປົ້າໝາຍການລົງທຶນ ຫຼື ດໍາເນີນທຸລະກິດບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ໃນກໍລະນີນີ້ ຜູ້ລົງທຶນລະເມີດຕໍ່ລະບຽບການ ແລະ ກົດໝາຍ ຂອງ ສປປ ລາວ.

3) ບໍ່ເສັຍພັນທະດ້ານພາສີ, ອາກອນ ແລະພັນທະດ້ານການເງິນອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ໃນລະນີນີ້ ຜູ້ລົງທຶນລະເມີດພັນທະທີ່ຕ້ອງປະຕິບັດຕໍ່ລັດຢ່າງຮ້າຍແຮງ.

4) ມີຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານໃຫ້ຍົກເລີກການລົງທຶນ, ໃນກໍລະນີນີ້ ຜູ້ລົງທຶນໄດ້ຖືກຕັດ ສິນຕາມຄໍາຕັດສິນອາດຈະມີການໃຊ້ແທນໜີ້ສິນ,ອາດຈະຕ້ອງໄດ້ມີການຊໍາລະສະສາງດ້ານຊັບສິນທີ່ກ່ຽວຂ້ອງກັບການລົງທຶນຈໍາເປັນຕ້ອງໄດ້ມີການຕົກລົງຍົກເລີກການລົງທຶນ.

5) ມີການລົ້ມລະລາຍຕາມກົດໝາຍ, ແນ່ນອນຢູ່ແລ້ວ ຖ້າມີການປະກາດລົ້ມລະລາຍ ຊັບສິນທຸກຢ່າງພາຍໃນວິສາຫະກິດຈະຕ້ອງໄດ້ມີການຊໍາລະສະສາງຕາມລະບຽບການ, ສະນັ້ນ ຈໍາເປັນຕ້ອງຕົງລົງໃຫ້ມີການຍົກເລີກ (ຍຸບເລີກ) ການເຄື່ອນໄຫວຂອງວິສາຫະກິດ ຫຼື ເອີ້ນວ່າຍົກເລີກການລົງທຶນ.

ໃນກໍລະນີມີການຍົກເລີກການລົງທຶນຈະບໍ່ພາໃຫ້ຜູ້ລົງທຶນພົ້ນຈາກພັນທະ ແລະ ໜີ້ສິນທີ່ມີຕໍ່ບຸກຄົນ, ນິຕິບຸກຄົນ ແລະ ຕໍ່ລັດ.

**3. ກໍລະນີທີ່ກໍ່ໃຫ້ເກີດການສິ້ນສຸດການລົງທຶນ**[4]

ການລົງທຶນຈະສິ້ນສຸດໃນກໍລະນີດັ່ງນີ້:

1) ໝົດອາຍຸການລົງທຶນ ຕາມທີ່ໄດ້ກໍານົດໄວ້ໃນໃບທະບຽນສໍາປະທານ ຫຼື ໂຄງການລົງທຶນໄດ້ປະຕິບັດສໍາເລັດແລ້ວ, ຖືວ່າເປັນການສິ້ນສຸດທີ່ບໍ່ມີການລະເມີດ ຫຼື ເຮັດຜິດແຕ່ຢ່າງໃດ;

2) ມີການຖອນ ຫຼື ຍົກເລີກໃບທະບຽນສໍາປະທານ ຫຼື ໃບທະບຽນວິສາຫະກິດ, ອາດຈະມີການລະເມີດດ້ານການເຄື່ອນໄຫວການລົງທຶນຈຶ່ງເປັນສາເຫດໃຫ້ມີການຖອນ ຫຼື ຍົກເລີກໃບທະບຽນສໍາປະທານ ຫຼື ໃບທະບຽນວິສາຫະກິດກ້າວໄປສູ່ການສິ້ນສຸດການເຄື່ອນໄຫວການລົງທຶນອັດຕະໂນມັດ;

3) ໄດ້ມີການຍົກເລີກວິສາຫະກິດຕາມຂັ້ນຕອນ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ;

4) ຍົກເລີກຕາມການສະເໜີຂອງຜູ້ລົງທຶນ ຫຼື ຄູ່ສັນຍາໂດຍມີການຢັ້ງຢືນຂອງຂະແໜງການທີ່ກ່ຽວຂ້ອງມີ;

5) ຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານໃຫ້ຍົກເລີກວິສາຫະກິດ ຫຼື ຍົກເລີກກິດຈະການການລົງທຶນ.

**4. ຂັ້ນຕອນການພິຈາລະນາ ການຍົກເລີກການລົງທຶນ:**

**+ ຝ່າຍລັດຖະບານ:** ອົງການທີ່ອະນຸຍາດ ເປັນຜູ້ອອກໜັງສືແຈ້ງຍົກເລີກການລົງທຶນ, ຊຶ່ງອົງການທີ່ກ່ຽວຂ້ອງຈະມີລະບຽບການສະເພາະໃນການດໍາເນີນການພິຈາລະນາຍົກເລີກ.

**+ ຝ່າຍຜູ້ລົງທຶນ:** ໃຫ້ປະຕິບັດພັນທະຕໍ່ລັດ ແລະ ໃຊ້ແທນໜີ້ສິນໃຫ້ແກ່ເຈົ້າໜີ້ ຢ່າງຄົບຖ້ວນ.

---

[4] ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016, ມາດຕາ 89.

ໃນກໍລະນີທີ່ວິສາຫະກິດສ່ວນບຸກຄົນ ຫາກຍຸບເລີກ ຜູ້ເປັນເຈົ້າຂອງມີພັນທະຊໍາລະສະສາງດ້ວຍຕົນເອງ ຫຼື ແຕ່ງຕັ້ງບຸກຄົນພາຍນອກມາເປັນຜູ້ຊໍາລະສະສາງແທນກໍໄດ້, ເວັ້ນເສຍແຕ່ການຍຸບເລີກດ້ວຍຄໍາຕັດສິນຂອງສານ ຫຼື ການລົ້ມລະລາຍຂອງວິສາຫະກິດສ່ວນບຸກຄົນ ຊຶ່ງຕ້ອງແມ່ນສານເປັນຜູ້ແຕ່ງຕັ້ງຜູ້ຊໍາລະສະສາງ.

(ລາຍລະອຽດຂອງຂັ້ນຕອນຕ່າງໆໃນການຍົກເລີກການລົງທຶນ ຫຼື ການຍຸບເລີກວິສາຫະກິດແມ່ນໄດ້ກໍານົດໃນກົດໝາຍວ່າດ້ວຍວິສາຫະກິດ ຂອງ ສປປ ລາວ ).

**5. ບາງກໍລະນີຕົວຈິງກ່ຽວທີ່ຕິດພັນກັບການຍົກເລີກການລົງທຶນ**

**5.1. ການຍຸບເລີກວິສາຫະກິດຮຸ້ນສ່ວນສາມັນ**

ວິສາຫະກິດຮຸ້ນສ່ວນສາມັນຕາມຄວາມໝາຍຂອງ ສປປ ລາວ ແມ່ນຮູບແບບວິສາຫະກິດຮຸ້ນສ່ວນໜຶ່ງ ຊຶ່ງຂາຮຸ້ນຮ່ວມກັນດໍາເນີນທຸລະກິດ ໂດຍອີງໃສ່ຄວາມເຊື່ອໃຈ ຊຶ່ງກັນ ແລະ ກັນຕົ້ນຕໍ ແລະ ຂາຮຸ້ນທຸກຄົນຮ່ວມກັນຮັບຜິດຊອບຕໍ່ໜີ້ສິນຂອງວິສາຫະກິດໂດຍບໍ່ຈໍາກັດ.

ວິສາຫະກິດຮຸ້ນສ່ວນສາມັນອາດຈະຖືກຍຸບເລີກດ້ວຍສາເຫດສາມປະການຄື: ການຍຸບເລີກດ້ວຍການຕົກລົງລະຫວ່າງຂາຮຸ້ນ, ການຍຸບເລີກຕາມຄໍາຕັດສິນຂອງສານ ແລະ ຍຸບເລີກດ້ວຍສາເຫດທາງດ້ານກົດໝາຍ.

ການຍຸບເລີກວິສາຫະກິດຮຸ້ນສ່ວນສາມັນບໍ່ວ່າຈະເກີດຂຶ້ນດ້ວຍສາເຫດໃດກໍຕາມຕ້ອງແຈ້ງການຍຸບເລີກຊົ່ວຄາວນໍາເຈົ້າໜ້າທີ່ທະບຽນວິສາຫະກິດພາຍໃນກໍານົດສິບວັນລັດຖະການ, ນັບແຕ່ວັນທີ່ມີສາເຫດໃຫ້ຍຸບເລີກເປັນຕົ້ນໄປ.

• **ການຍຸບເລີກດ້ວຍການຕົກລົງກັນຂອງຂາຮຸ້ນ :**ວິສາຫະກິດຮຸ້ນສ່ວນສາມັນສາມາດຍຸບເລີກໄດ້ດ້ວຍການຕົກລົງເປັນເອກະສັນຂອງບັນດາຂາຮຸ້ນເມື່ອໃດກໍໄດ້.

• **ການຍຸບເລີກຕາມຄໍາຕັດສິນຂອງສານ:** ຂາຮຸ້ນຂອງວິສາຫະກິດຮຸ້ນສ່ວນສາມັນໃດໜຶ່ງສາມາດຮ້ອງຂໍຕໍ່ສານເພື່ອພິຈາລະນາໃຫ້ວິສາຫະກິດຮຸ້ນສ່ວນສາມັນຂອງຕົນຍຸບເລີກເມື່ອເຫັນວ່າ:

1) ການດໍາເນີນທຸລະກິດຂອງວິສາຫະກິດຮຸ້ນສ່ວນສາມັນຫຼຸບທຶນ ແລະ ບໍ່ສາມາດແກ້ໄຂໄດ້;

2) ມີເຫດສຸດວິໄສທີ່ພາໃຫ້ເວິສາຫະກິດຮຸ້ນສ່ວນສາມັນບໍ່ສາມາດດໍາເນີນທຸລະກິດຕໍ່ໄປໄດ້;

3) ຕົນໄດ້ຖືກຫຼອກລວງໃຫ້ຫຼົງເຊື່ອ ຫຼື ຖືກບັງຄັບໃຫ້ເຂົ້າເປັນຂາຮຸ້ນ;

4) ຂາຮຸ້ນໃດໜຶ່ງໄດ້ ຫຼື ກໍາລັງມີການກະທໍາທີ່ຈົງໃຈລະເມີດສັນຍາຂາຮຸ້ນ ຫຼື ກົດລະບຽບ ຫຼື ມີການກະທໍາທີ່ເປັນການປະໝາດເລີ່ນເລີ້ ຊຶ່ງສ້າງຄວາມເສຍຫາຍຢ່າງຮ້າຍແຮງຕໍ່ວິສາຫະກິດຮຸ້ນສ່ວນສາມັນ.

ຂາຮຸ້ນທີ່ຮ້ອງຂໍໃຫ້ສານພິຈາລະນາຍຸບເລີກ, ຕ້ອງບໍ່ແມ່ນຜູ້ທີ່ເປັນຕົ້ນເຫດຂອງກໍລະນີດັ່ງກ່າວຂ້າງເທິງ.

ບັນດາຂາຮຸ້ນຈະຮ້ອງຂໍຕໍ່ສານພິຈາລະນາໃຫ້ຂາຮຸ້ນທີ່ເປັນຕົ້ນເຫດໃຊ້ແທນຄ່າເສຍຫາຍ ຫຼື ໃຫ້ອອກຈາກການເປັນຂາຮຸ້ນແທນການຍຸບເລີກກໍ; ໃນກໍລະນີວິສາຫະກິດຮຸ້ນສ່ວນສາມັນຕ້ອງແບ່ງຊັບສິນຂອງວິສາຫະກິດໃຫ້ຜູ້ກ່ຽວຕາມມູນຄ່າຕົວຈິງໃນເວລາແບ່ງປັນຊັບສິນດັ່ງກ່າວ ໂດຍຫັກຄ່າເສຍຫາຍທີ່ຜູ້ກ່ຽວສ້າງຂຶ້ນອອກ ເວັ້ນເສຍແຕ່ ບັນດາຂາຮຸ້ນໄດຕົກລົງກັນໄວ້ຢ່າງອື່ນ.

• **ການຍຸບເລີກດ້ວຍສາເຫດທາງກົດໝາຍ:**

ວິສາຫະກິດຮຸ້ນສ່ວນສາມັນອາດຈະຍຸບເລີກດ້ວຍສາເຫດທາງກົດໝາຍໃດໜຶ່ງ ດັ່ງນີ້:

1) ການຍຸບເລີກທີ່ກໍານົດໄວ້ໃນສັນຍາ ຫຼື ກົດລະບຽບຂອງວິສາຫະກິດຮຸ້ນສ່ວນສາມັນ;

2) ວິສາຫະກິດຮຸ້ນສ່ວນສາມັນເຫຼືອຂາຮຸ້ນຜູ້ດຽວ;

3) ຂາຮຸ້ນໃດໜຶ່ງເສຍຊີວິດ, ລົ້ມລະລາຍ ຫຼື ຂາດຄວາມສາມາດທາງດ້ານການປະພຶດ, ເວັ້ນເສຍແຕ່ໄດ້ຕົກລົງກັນໄວ້ຢ່າງອື່ນ;

4) ການຍຸບເລີກຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດຂອງ ສປປ ລາວ;

ໃນກໍລະນີທີ່ຂາຮຸ້ນໃດໜຶ່ງເສຍຊີວິດ, ແຕ່ວິສາຫະກິດຮຸ້ນສ່ວນສາມັນບໍ່ໄດ້ຍຸບເລີກຜູ້ສືບທອດຂອງຜູ້ເສຍຊີວິດໄດ້ຮັບຊັບສິນຂອງຜູ້ເສຍຊີວິດຢ່າງເຕັມສ່ວນໃນເວລາແບ່ງປັນຜົນກຳໄລ ຫຼື ບັນຊີຊັບສິນຂອງວິສາຫະກິດຮຸ້ນສ່ວນສາມັນ.

**• ການຊຳລະສະສາງວິສາຫະກິດຮຸ້ນສ່ວນສາມັນໃນເວລາຍຸບເລີກ**

ບັນດາຂາຮຸ້ນວິສາຫະກິດຮຸ້ນສ່ວນສາມັນສາມາດຕົກລົງກັນ ເພື່ອເລືອກເອົາວິທີການແບ່ງປັນຊັບສິນ ຫຼື ການຊຳລະສະສາງຕາມທີ່ກຳນົດໄວ້ໃນກົດລະບຽບຂອງວິສາຫະກິດຮຸ້ນສ່ວນສາມັນ ຫຼື ຕາມການຕົກລົງກັນຂອງບັນດາຂາຮຸ້ນ, ເວັ້ນເສຍແຕ່ກໍລະນີມີການຍຸບເລີກທີ່ມີສາເຫດມາຈາກການລົ້ມລະລາຍ, ສານຕັດສິນໃຫ້ຍຸບເລີກ, ຂາຮຸ້ນຂອງວິສາຫະກິດຮຸ້ນສ່ວນສາມັນເຫຼືອພຽງຜູ້ດຽວ.

**- ການແຕ່ງຕັ້ງ ຫຼື ປົດຜູ້ຊຳລະສະສາງ**

ການຊຳລະສະສາງຂອງວິສາຫະກິດຮຸ້ນສ່ວນສາມັນອາດຈະດຳເນີນໄປໂດຍຜູ້ຈັດການ ຫຼື ຂາຮຸ້ນທັງໝົດເປັນຜູ້ຊຳລະສະສາງຮ່ວມກັນ ຫຼື ແຕ່ງຕັ້ງໃຫ້ຂາຮຸ້ນໃດໜຶ່ງ ຫຼື ບຸກຄົນພາຍນອກມາທຳການຊຳລະສະສາງແທນກໍໄດ້, ການແຕ່ງຕັ້ງດັ່ງກ່າວຕ້ອງໄດ້ຮັບຄະແນນສຽງເປັນເອກະສັນຈາກບັນດາຂາຮຸ້ນ.

ໃນກໍລະນີທີ່ຄະແນນສຽງຂອງຂາຮຸ້ນ ເພື່ອເລືອກຜູ້ຊຳລະສະສາງບໍ່ພຽງພໍຕາມທີ່ກ່າວມານັ້ນ, ບັນດາຂາຮຸ້ນຂອງວິສາຫະກິດຮຸ້ນສ່ວນສາມັນສາມາດຮ້ອງຂໍໃຫ້ສານເປັນຜູ້ແຕ່ງຕັ້ງ, ຜູ້ຊຳລະສະສາທີ່ໄດ້ຮັບການແຕ່ງຕັ້ງມາດ້ວຍຮູບການໃດກໍຈະຖືກປົກດ້ວຍຮູບການນັ້ນ.

ການແຕ່ງຕັ້ງຜູ້ຊຳລະສະສາງ ໃນກໍລະນີຂອງການຍຸບເລີກວິສາຫະກິດຮຸ້ນສ່ວນສາມັນຍ້ອນການລົ້ມລະລາຍຕາມຄຳຕັດສິນຂອງສານ ຫຼື ວິສາຫະກິດຮຸ້ນສ່ວນສາມັນເຫຼືອພຽງຂາຮຸ້ນຜູ້ດຽວແມ່ນສານເປັນຜູ້ແຕ່ງຕັ້ງເທົ່ານັ້ນ.

ວິສາຫະກິດຮຸ້ນສ່ວນສາມັນທີ່ຍຸບເລີກ ໂດຍມີສາເຫດມາຈາກການເສຍຊີວິດຂອງຂາຮຸ້ນໃດໜຶ່ງນັ້ນຜູ້ສືບທອດຂອງຂາຮຸ້ນທີ່ເສຍຊີວິດເປັນ ຫຼື ເຂົ້າຮ່ວມເປັນຜູ້ຊຳລະສະສາງໄດ້; ໃນກໍລະນີທີ່ຜູ້ສືບທອດຫຼາຍຄົນໃຫ້ແຕ່ງຕັ້ງຄົນໃດໜຶ່ງເປັນຜູ້ຕາງໜ້າແທນ.

ການແຕ່ງຕັ້ງຜູ້ຊຳລະສະສາງດ້ວຍສານ ແລະ ການແຕ່ງຕັ້ງແທນຜູ້ຊຳລະສະສາງທີ່ບໍ່ສາມາດປະຕິບັດໜ້າທີ່ໄດ້ແມ່ນໄດ້ກຳນົດລະອຽດໃນກົດໝາຍວ່າດ້ວຍວິສາຫະກິດຂອງ ສປປ ລາວ,ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013, ມາດຕາ 65 ແລະ 66.

**- ສິດ ແລະ ໜ້າທີ່ຂອງຜູ້ຊຳລະສະສາງ**

ໃນກໍລະນີທີ່ວິສາຫະກິດຮຸ້ນສ່ວນສາມັນຖືກຍຸບເລີກ, ຜູ້ຊຳລະສະສາງມີສິດ ແລະ ໜ້າທີ່ດັ່ງນີ້:

1) ແຈ້ງເປັນລາຍລັກອັກສອນກ່ຽວກັບການຍຸບເລີກໃຫ້ເຈົ້າໜ້າທີ່ວິສາຫະກິດຮຸ້ນສ່ວນສາມັນ ແລະ ປະກາດສື່ມວນຊົນໃດໜຶ່ງທີ່ເໝາະສົມພາຍໃນກຳນົດ 10 ວັນລັດຖະການ, ນັບແຕ່ວັນທີ່ມີສາເຫດຂອງການຍຸບເລີກເປັນຕົ້ນໄປ ເພື່ອໃຫ້ມວນຊົນຊາບ ແລະ ໃຫ້ເຈົ້າໜ້າທີ່ຍື່ນເອກະສານກ່ຽວກັບການເປັນໜີ້ສິນຂອງວິວສຫະກິດຮຸ້ນສ່ວນສາມັນ;

2) ເຕົ້າໂຮມຊັບສິນທັງໝົດ, ສ້າງບັນຊີຊັບສິນ ແລະ ໃບສະຫຼຸບຊັບສິນບັດ;

3) ສືບຕໍ່ເຮັດວຽກຂອງວິສາຫະກິດຮຸ້ນສ່ວນທີ່ຍັງຄ້າງຄາໃຫ້ສຳເລັດ;

4) ໄດ້ຮັບຄ່າຕອບແທນໃນການປະຕິບັດໜ້າທີ່ຂອງຕົນ ໂດຍແມ່ນວິສາຫະກິດຮຸ້ນສ່ວນສາມັນເປັນຜູ້ຮັບຜິດຊອບຕາມການຕົກລົງກັນ;

5) ດຳເນີນມາດຕະການທີ່ຈຳເປັນຕ່າງໆ ແນໃສ່ປົກປັກຮັກສາຊັບສິນບັດ, ທວງໜີ້ສິນໃຫ້ຄົບຖ້ວນ, ຂາຍ ຫຼື ໂອນຊັບສິນບັດຂອງວິສາຫະກິດຮຸ້ນສ່ວນສາມັນ;

6) ສົ່ງໃບສະຫຼຸບຊັບສິນບັດໃຫ້ຜູ້ກວດສອບບັນຊີເພື່ອຢັ້ງຢືນຄວາມຖືກຕ້ອງ;

7) ລາຍງານກ່ຽວກັບການເຕົ້າໂຮມຊັບສິນ ແລະ ຜົນຂອງວຽກງານຕ່າງໆໃຫ້ເຈົ້າໜີ້ທີ່ກ່ຽວຂ້ອງ, ຂາຍຮຸ້ນ ຫຼື ສານໃນກໍລະນີທີ່ສານເປັນຜູ້ແຕ່ງຕັ້ງ;

8) ຮຽກປະຊຸມເຈົ້າໜີ້ ແລະ ຂາຮຸ້ນເພື່ອຮັບຮອງ ຫຼື ຕົກລົງບັນຫາຕ່າງໆ ທີ່ເຫັນວ່າຈຳເປັນ ແລະ ຢ່າງໜ້ອຍໃຫ້ຮຽກປະຊຸມ ຫົກເດືອນ ເທື່ອໜຶ່ງ;

9) ປະຕິບັດໜ້າທີ່ຕາມທີ່ກອງປະຊຸມຂາຮຸ້ນ ແລະ ເຈົ້າໜີ້ມອບໝາຍໃຫ້;

10) ລາຍງານໃບສະຫຼຸບຊັບສິນບັດທຸກງວດໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ;

11) ຊຳລະສະສາງໜີ້ສິນໃຫ້ເຈົ້າໜີ້ ແລະ ຈັດການແບ່ງປັນຊັບສິນສ່ວນທີ່ເຫຼືອໃຫ້ບັນດາຂາຮຸ້ນ;

12) ໄກ່ເກ່ຍບັນຫາ ຫຼື ຮ້ອງຟ້ອງຕໍ່ສານ, ເພື່ອດຳເນີນຄະດີໃນນາມວິສາຫະກິດຮຸ້ນສ່ວນສາມັນ;

13) ຜູ້ຊຳລະສະສາງ ຕ້ອງລາຍງານຕໍ່ຂາຮຸ້ນ ຫຼື ຕໍ່ສານ ຖ້າຫາກສານເປັນຜູ້ແຕ່ງຕັ້ງ, ເມື່ອເຫັນວ່າຊັບສິນຂອງວິສາຫະກິດຮຸ້ນສ່ວນສາມັນ ລວມທັງຂອງບັນດາຂາຮຸ້ນມີບໍ່ພຽງພໍກັບການຊຳລະສະສາງໜີ້ສິນ; ໃນກໍລະນີທີ່ວິສາຫະກິດຮຸ້ນສ່ວນສາມັນບໍ່ສາມາດແກ້ໄຂສະພາບໜີ້ສິນຈົນເກີນຄວາມສາມາດຊຳລະໄດ້ ຜູ້ຊຳລະສະສາງສາມາດຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາໃຫ້ລົ້ມລະລາຍ.

ພາຍຫຼັງທີ່ສານພິຈາລະນາໃຫ້ລົ້ມລະລາຍແລ້ວ ຕ້ອງປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະບາຍຂອງວິສາຫະກິດ; ໃນກໍລະນີນີ້ສິດ ແລະ ໜ້າທີ່ຂອງຜູ້ຊຳລະສະສາງສິ້ນສຸດລົງ ເມື່ອໄດ້ມອບໂອນວຽກງານທັງໝົດໃຫ້ຄະນະຄວບຄຸມຊັບສິນແລ້ວ.

**5.2. ການຍຸບເລີກບໍລິສັດຈຳກັດ**

ບໍລິສັດຈຳກັດ ໃນຄວາມໝາຍຂອງ ສປປ ລາວ ແມ່ນຮູບແບບບໍລິສັດໜຶ່ງ ຊຶ່ງມີຜູ້ຖືຮຸ້ນແຕ່ 02 ຄົນຂຶ້ນໄປ ແລະ ສູງສຸດບໍ່ເກີນ 30 ຄົນ ເວັ້ນເສຍແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ມາດຕາ 90ຂອງກົດໝາຍວິສາຫະກິດ, ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013 ແລະ ບໍລິສັດຈຳກັດ ຊຶ່ງມີຜູ້ຖືຮຸ້ນພຽງແຕ່ຜູ້ດຽວ, ເອີ້ນວ່າ ບໍລິສັດຈຳກັດຜູ້ດຽວ.

ບໍລິສັດຈຳກັດອາດຈະຖືກຍຸບເລີກດ້ວຍສາເຫດສອງປະການ ຄືການຍຸບເລີກໂດຍສາເຫດທາງກົດໝາຍ ແລະ ການຍຸບເລີກຕາມຄຳຕັດສິນຂອງສານ.

- **ການຍຸບເລີກໂດຍສາເຫດທາງກົດໝາຍ**

ບໍລິສັດຈຳກັດອາດຈະຖືກຍຸບເລີກໂດຍສາເຫດທາງດ້ານກົດໝາຍໃດໜຶ່ງດັ່ງນີ້:

1) ຍຸບເລີກຕາມທີ່ໄດ້ກຳນົດໄວ້ໃນລະບຽບການຂອງບໍລິສັດຈຳກັດ;

2) ກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດຈຳກັດ ມີມະຕິໃຫ້ຍຸບເລີກຕາມມະຕິກອງປະຊຸມຜູ້ຖືຮຸ້ນ;

3) ຖືກລົ້ມລະລາຍ;

4) ຍຸບເລີກຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ.

**• ການຍຸບເລີກຕາມຄຳຕັດສິນຂອງສານ**

ຜູ້ອຳນວຍການ ຫຼື ຜູ້ຖືຮຸ້ນໃດໜຶ່ງມີສິດຮ້ອງຟ້ອງຕໍ່ສານ ເພື່ອພິຈາລະນາໃຫ້ບໍລິສັດຈຳກັດຍຸບເລີກດ້ວຍສາເຫດໃດໜຶ່ງ ດັ່ງນີ້:

1) ມີການລະເມີດຂໍ້ກຳນົດ ຫຼື ຂັ້ນຕອນຂອງການສ້າງຕັ້ງຕາມທີ່ກຳນົດໄວ້ໃນກົດໝາຍວິສາຫະກິດ;

2) ການລະເມີດສັນຍາສ້າງຕັ້ງ ຫຼື ກົດລະບຽບຂອງບໍລິສັດຈຳກັດ;

3) ບໍລິສັດຈຳກັດເຄື່ອນໄຫວທຸລະກິດຫຼຸບທຶນຢ່າງຕໍ່ເນື່ອງ ແລະ ບໍ່ສາມາດແກ້ໄຂໄດ້;

4) ມີເຫດສຸດວິໄສທີ່ເຮັດໃຫ້ບໍລິສັດຈຳກັດບໍ່ສາມາດດຳເນີນທຸລະກິດຂອງຕົນຕໍ່ໄປໄດ້;

5) ຍັງເຫຼືອຜູ້ຖືຮຸ້ນແຕ່ຜູ້ດຽວ ຫຼື ມີຈຳນວນຜູ້ຖືຮຸ້ນຫຼາຍກວ່າສາມສິບຄົນ ເວັ້ນເສຍແຕ່ກໍລະນີທີ່ໄດ້ກຳນົດເປັນຢ່າງອື່ນຕາມກົດໝາຍ.

ເມື່ອໄດ້ຮັບຄຳຮ້ອງຟ້ອງແລ້ວສານສາມາດຈະພິຈາລະນາສັ່ງຍຸບເລກີ ຫຼື ສັ່ງໃຫ້ບໍລິສັດຈຳກັດທີ່ກ່ຽວຂ້ອງແກ້ໄຂຂໍ້ຜິດພາດແທນກໍໄດ້ ຖ້າເປັນບັນຫາທີ່ບໍ່ຮ້າຍແຮງ ຫຼື ສາມາດແກ້ໄຂໄດ້.

**6. ການຍົກເລີກ ແລະ ສິ້ນສຸດການລົງທຶນ ເກີດຈາກການລົ້ມລະລາຍຂອງວິສາຫະກິດ**

**• ສາເຫດທີ່ສານຕັດສິນໃຫ້ລົ້ມລະລາຍ**

ຕາມຫຼັກການ ແລະ ຂໍ້ກຳນົດທາງດ້ານກົດໝາຍຂອງ ສປປ ລາວ ສາເຫດທີ່ສານຕັດສິນໃຫ້ວິສາຫະກິດໃດໜຶ່ງລົ້ມລະລາຍແມ່ນ: ວິສາຫະກິລູກໜີ້ສະໝັກໃຈຂໍລົ້ມລະລາຍ, ວິສາຫະກິດລູກໜີ້ບໍ່ໄດ້ສະເໜີຂໍຟື້ນຟູວິສາຫະກິດເມື່ອມີການຮ້ອງຟ້ອງໃຫ້ລົ້ມລະລາຍ, ວິສາຫະກິດລູກໜີ້ບໍ່ສາມາດຕົກລົງຂໍ້ສະເໜີແກ້ໄຂໜີ້ສິນກັບເຈົ້າໜີ້ໄດ້, ກອງປະຊຸມເຈົ້າໜີ້ປະຕິເສດ ຫຼື ບໍ່ຮັບຮອງຂໍ້ສະເໜີແກ້ໄຂໜີ້ສິນ ຫຼື ແຜນການຟື້ນຟູວິສາຫະກິດ, ວິສາຫະກິດລູກໜີ້ ບໍ່ສາມາດປະຕິບັດໄດ້ຕາມຂໍ້ສະເໜີແກ້ໄຂໜີ້ສິນ ຫຼື ແຜນການຟື້ນຟູວິສາຫະກິດ, ວິສາຫະກິດລູກໜີ້ບໍ່ປະຕິບັດຕາມ ຂໍ້ສະເໜີແກ້ໄຂໜີ້ສິນ , ແຜນການພື້ນຟູວິສາຫະກິດ ຫຼື ຄຳສັ່ງຂອງສານໃນໄລຍະເວລາຟື້ນຟູວິສາຫະກິດ ແລະ ເຈົ້າຂອງວິສາຫະກິດສ່ວນບຸກຄົນ ຫຼື ບໍ່ລິສັດຈຳກັດຜູ້ດຽວ ເສຍຊີວິດ ໂດຍບໍ່ມີຜູ້ສືບທອດໃນກໍລະນີມີການຮ້ອງຟ້ອງລົ້ມລະລາຍ.

**• ການຕັດສິນກ່ຽວກັບການລົ້ມລະລາຍ**

ຜູ້ພິພາກສາທີ່ຖືກມອບໝາຍ ຕ້ອງໄດ້ຄົ້ນຄວ້າຄະດີ,ກວດກາເອກະສານ ແລະ ຂໍ້ມູນຕ່າງໆ ແລ້ວສະເໜີຕໍ່ສານເພື່ອພິຈາລະນາຕັດສິນກ່ຽວກັບການລົ້ມລະລາຍຂອງວິສາຫະກິດລູກໜີ້ຕາມແຕ່ລະກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ:[5]

1) ພາຍໃນເວລາ 40ວັນ ນັບແຕ່ວັນມີຄຳສັ່ງເປີດການພິຈາລະນາຄະດີລົ້ມລະລາຍເປັນຕົ້ນໄປ;

2) ພາຍໃນເວລາ 20ວັນ ນັບແຕ່ວັນໄດ້ຮັບການລາຍງານຈາກຜູ້ຄວບຄຸມຊັບສິນ ຫຼື ມະຕິກອງປະຊຸມເຈົ້າໜີ້; ສຳລັບວິສາຫະກິດສ່ວນບຸກຄົນ ແລະ ວິສາຫະກິດຮຸ້ນສ່ວນທີ່ຖືກຕັດສິນລົ້ມລະລາຍ ເຈົ້າຂອງວິສາຫະກິດສ່ວນບຸກຄົນ ແລະ ຂາຮຸ້ນປະເພດບໍ່ຈຳກັດໜີ້ສິນຂອງວິສາຫະກິດຮຸ້ນສ່ວນກໍໃຫ້ຖືວ່າລົ້ມລະລາຍເຊັ່ນດຽວກັນ.

**• ການປະກາດການລົ້ມລະລາຍ**

[5] ກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ, ສະບັບເລກທີ 75/ສພຊ,ລົງວັນທີ 26ທັນວາ 2019, ມາດຕາ 77.

ພາຍໃນເວລາ 10 ວັນ ນັບແຕ່ວັນຄຳຕັດສິນໃຫ້ວິສາຫະກິດລົ້ມລະລາຍໃຊ້ໄດ້ຢ່າງເດັດຂາດ ແລ້ວສານຕ້ອງປະກາດຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ 30 ວັນ ພ້ອມກັນນັ້ນກໍຕ້ອງສົ່ງສຳເນົາຄຳຕັດສິນໃຫ້:

1) ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;
2) ເຈົ້າໜີ້ ແລະ ຜູ້ຮ້ອງຟ້ອງອື່ນ;
3) ວິສາຫະກິດລູກໜີ້ ທີ່ຖືກຕັດສິນໃຫ້ລົ້ມລະລາຍ;
4) ຜູ້ຄວບຊັບສິນ;
5) ຂະແໜງອຸດສາຫະກຳ ແລະ ການຄ້າ ບ່ອນວິສາຫະກິດລູກໜີ້ຂຶ້ນທະບຽນ;
6) ຂະແໜງສ່ວຍສາອາກອນ;
7) ສະຫະພັນກຳມະບານຂັ້ນແຂວງ;
8) ອົງການອື່ນທີ່ກ່ຽວຂ້ອງ.

- **ພັນທະຂອງວິສາຫະກິດລົ້ມລາຍ**

ວິສາຫະກິດລູກໜີ, ຂາຮຸ້ນ ຫຼື ຜູ້ຖືຮຸ້ນຂອງວິສາຫະກິດລູກໜີ້ ມີພັນທະສະໜອງຂໍ້ມູນ ແລະ ໃຫ້ການຮ່ວມມືກັບອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃນການຊຳລະສະສາງໜີ້ສິນ ຕາມຄຳຕັດສິນຂອງສານ.

ເຈົ້າຂອງວິສາຫະກິດສ່ວນບຸກຄົນ ຫຼື ຂາຮຸ້ນປະເພດບໍ່ຈຳກັດໜີ້ສິນຂອງວິສາຫະກິດຮຸ້ນສ່ວນທີ່ຖືກສານຕັດສິນໃຫ້ລົ້ມລະລາຍ ຈະອອກນອກປະເທດໄດ້ກໍຕໍ່ເມື່ອມີຄວາມຈຳເປັນ ຫຼື ມີການຄໍ້າປະກັນທີ່ເໝາະສົມ ແລະ ຕ້ອງໄດ້ຮັບອະນຸຍາດຈາກສານທີ່ຕັດສິນຄະດີເທົ່ານັ້ນເສຍກ່ອນ.

ໃນກໍລະນີສານ ຫາກໄດ້ຮັບລາຍງານ ຫຼື ເຫັນວ່າບຸກຄົນທີ່ມານັ້ນ ຫາກມີພຶດຕິກຳຫຼົບຫຼີກອອກນອກປະເທດ, ສານມີສິດອອກຄຳສັ່ງກັກຕົວຜູ້ກ່ຽວໄດ້.

## References:


1. ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
2. ຕຳລາຮຽນວິຊາກົດໝາຍສົ່ງເສີມການລົງທຶນ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2021;
3. ກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
4. ກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ, ສະບັບເລກທີ 75/ສພຊ,ລົງວັນທີ 26 ທັນວາ 2019.